# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 13
## Management of investment promotion
## ການຄຸ້ມຄອງວຽກງານສົ່ງເສີມການລົງທຶນ

**1. ອົງການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ແລະ ຫຼັກການຄຸ້ມຄອງການລົງທຶນ**

- **ອົງການຄຸ້ມຄອງວຽກງານສົ່ງເສີມການລົງທຶນ:**

"ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານການສົ່ງເສີມການລົງທຶນ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດໂດຍມອບໃຫ້ຂະແໜງການແຜນການ ແລະ ການລົງທຶນເປັນຜູ້ຮັບຜິດຊອບໂດຍກົງ ໂດຍປະສານ ສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ"[1].

ທ້ອງຖິ່ນເປັນຜູ້ອອກໃບທະບຽນ ແລະ ຄຸ້ມຄອງການລົງທຶນເປັນຕົ້ນຕໍ, ສຳລັບສູນກາງ ແມ່ນອອກໃບທະບຽນ ແລະ ຄຸ້ມຄອງບັນດາກິດຈະການທີ່ມີລັກສະນະຍຸດທະສາດເປັນຕົ້ນ ກິດຈະການທີ່ພົວພັນເຖິງຫຼາຍຂະແໜງການ ຫຼື ຫຼາຍທ້ອງຖິ່ນ , ກິດຈະການທີ່ນຳໃຊ້ເຕັກໂນໂລຢີສູງ, ສະຖາບັນການເງິນ, ການປະກັນໄພ, ໂທລະຄົມມະ ນາຄົມ, ການບິນ, ສິດຂອງລັດ, ພະລັງງານ, ແຮ່ທາດ, ນ້ຳມັນດິບ, ອາຍແກັສ ແລະ ອື່ນໆ ຕາມການກຳນົດຂອງລັດຖະບານ ໂດຍມີການສົມທົບລະຫວ່າງອົງການທີ່ອອກໃບທະບຽນກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ.

ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ເຂົ້າຮ່ວມຕາມພາລະບົດບາດຂອງຕົນ ໃນການຄຸ້ມຄອງກິດຈະການລົງທຶນ ທີ່ສູນກາງອອກໃບທະບຽນ ຊຶ່ງຕັ້ງຢູ່ທ້ອງຖິ່ນຂອງຕົນ.

ການແບ່ງຂັ້ນຄຸ້ມຄອງ ທີ່ໄດ້ກຳນົດໄວ້ສະເພາະໃນກົດໝາຍທີ່ກ່ຽວຂ້ອງແລ້ວໃຫ້ປະຕິບັດຕາມກົດໝາຍ ດັ່ງກ່າວ.

ສຳລັບອົງການຄຸ້ມຄອງການລົງທຶນໃນເຂດເສດຖະກິດພິເສດ, " ລັດຖະບານເປັນຜູ້ຄຸ້ມຄອງວຽກງານເຂດເສດຖະກິດພິເສດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອງເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ"[2].

ອົງການຄຸ້ມຄອງວຽກງານເຂດເສດຖະກິດພິເສດ ປະກອບດ້ວຍ:

1) ກະຊວງແຜນການ ແລະ ການລົງທຶນ;
2) ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ;
3) ຄະນະຄຸ້ມຄອງເຂດ;

---

[1] ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14 /ສພຊ, ລົງວັນທີ 17 ພະຈິກ 2016, ມາດຕາ 98

[2] ດຳລັດວ່າດ້ວຍເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018 ວ່າດ້ວຍເຂດເສດຖະກິດພິເສດ, ມາດຕາ 54.

4) ອົງການປົກຄອງແຂວງ, ນະຄອນຫຼວງ;

5) ຂະແໜງການອື່ນ.

- **ຫຼັກການຄຸ້ມຄອງການລົງທຶນ**

\+ ແບ່ງຄວາມຮັບຜິດຊອບໃຫ້ທ້ອງຖິ່ນຫຼາຍຂຶ້ນ, ເພີ່ມຄວາມຮັບຜິດຊອບໃຫ້ສູນກາງໃນການຄຸ້ມຄອງມະຫາພາກ, ຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂອງທ້ອງຖິ່ນ;

\+ ອົງການໃດ, ຂັ້ນໃດ ເປັນຜູ້ອອກໃບທະບຽນ ແມ່ນອົງການນັ້ນ ຂັ້ນນັ້ນເປັນຜູ້ຄຸ້ມຄອງ, ຕິດຕາມ, ກວດກາປະເມີນຜົນກ່ຽວກັບການລົງທຶນ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

\+ ການລົງທຶນໃນຂະແໜງການໃດ ແມ່ນຂະແໜງການນັ້ນ ເປັນເຈົ້າການຄຸ້ມຄອງທາງດ້ານວິຊາການໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ.

**2. ສິດ ແລະ ໜ້າທີ່ຂອງຂະແໜງແຜນການ ແລະ ການລົງທຶນໃນການຄຸ້ມຄອງການລົງທຶນ**

**+ ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ**

ໃນການຄຸ້ມຄອງການລົງທຶນ ກະຊວງແຜນການ ແລະ ການລົງທຶນມີ ສິດ ແລະ ໜ້າທີ່ດັ່ງນີ້:

1) ຄົ້ນຄວ້າ, ສ້າງ ແລະ ໂຄສະນາເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ລະບຽບກ່ຽວກັບການສົ່ງເສີມການລົງທຶນ ແລະ ການຄຸ້ມຄອງການລົງທຶນຢູ່ ສປປ ລາວ ແລະ ການອອກໄປລົງທຶນໄປຢູ່ຕ່າງປະເທດ;

2) ສ້າງ ແລະ ປະກາດໃຊ້ບັນດາແບບພິມທີ່ພົວພັນກັບການຂໍອະນຸຍາດລົງທຶນຢູ່ ສປປ ລາວ ຫຼື ການອອກໄປລົງທຶນໄປຢູ່ຕ່າງປະເທດ;

3) ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄ້ວາ, ເຈລະຈາສັນຍາສຳປະທານ ແລະ ຕາງໜ້າລັດຖະບານລົງນາມໃນສັນຍາດັ່ງກ່າວ ຕາມການມອບໝາຍຂອງລັດຖະບານ;

4) ຄົ້ນຄ້ວາການນຳສະເໜີ ການໂຈະ, ການປ່ຽນແປງການຍົກເລີກໂຄງການ ຫຼື ກິດຈະການ ການລົງທຶນທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5) ສ້າງ ແລະ ຄຸ້ມຄອງ ລະບົບຂໍ້ມູນຂ່າວສານ, ສະໜອງຂໍ້ມູນຂ່າວສານ ກ່ຽວກັບນະໂຍບາຍ ການສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນ ແລະການອອກໄປລົງທຶນໄປຢູ່ຕ່າງປະເທດ;

6) ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍກ່ຽວກັບການສົ່ງເສີມການລົງທຶນໃນຂອບເຂດທົ່ວປະເທດ;

7) ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການປະເມີນການຈັດຕັ້ງປະຕິບັດໂຄງການ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນຂອບເຂດທົ່ວປະເທດ ລວມທັງການຄຸ້ມຄອງຜູ້ລົງທຶນພາຍໃນ ທີ່ໄປລົງທຶນຢູ່ຕ່າງປະເທດ;

8) ຊີ້ນຳ ແລະ ອຳນວຍຄວາມສະດວກໃນການດຳເນີນການບໍລິການ ການລົງທຶນປະຕູດຽວໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະມີປະສິດທິຜົນ;

9) ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບການສົ່ງເສີມການລົງທຶນ;

10) ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການສົ່ງເສີມການລົງທຶນ;

11) ຄຸ້ມຄອງວຽກງານເສດຖະກິດພິເສດ;

12) ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການສົ່ງເສີມການລົງທຶນຕໍ່ລັດຖະບານຢ່າງເປັນປົກກະຕິ;

13) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**+ ສິດ ແລະ ໜ້າທີ່ ຂອງຂະແໜງແຜນການ ແລະ ການລົງທຶນ ແຂວງ, ນະຄອນ**

1) ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາເຜີຍແຜ່ຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ;

2) ສ້າງ ແລະ ຄຸ້ມຄອງລະບົບຂໍ້ມູນຂ່າວສານ, ສະໜອງຂໍ້ມູນຂ່າວສານກ່ຽວກັບນະໂຍບາຍການສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນຕາມຄວາມຮັບຜິດຊອບໃນທ້ອງຖິ່ນຂອງຕົນ;

3) ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າເຈລະຈາສັນຍາສຳປະທານ ແລະ ຕາງໜ້າໃຫ້ແຂວງລົງນາມໃນສັນຍາດັ່ງກ່າວ ຕາມການມອບໝາຍ;

4) ຊຸກຍູ້, ຕິດຕາມກວດກາ, ປະເມີນຜົນການປະຕິບັດໂຄງການ, ກິດຈະການລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ;

5) ປະສານສົມທົບກັບຂະແໜງປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ແລະແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນກິດຈະການຂອງຕົນ;

6) ຄົ້ນຄ້ວາການນຳສະເໜີການໂຈະ, ການປ່ຽນແປງການຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

7) ອຳນວຍຄວາມສະດວກໃນການດຳເນີນການບໍລິການ ການລົງທຶນປະຕູດຽວໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະມີປະສິດທິຜົນ;

8) ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການສົ່ງເສີມການລົງທຶນຕາມການມອບໝາຍຂອງຂັ້ນເທິງ;

9) ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບການສົ່ງເສີມການລົງທຶນ;

10) ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການສົ່ງເສີມການລົງທຶນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

11) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**+ ສິດ ແລະ ໜ້າທີ່ຂອງຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ**

1) ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາເຜີຍແຜ່ຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ ຕາມຮັບຜິດຊອບຂອງຕົນ;

2) ສ້າງ ແລະ ຄຸ້ມຄອງລະບົບຂໍ້ມູນຂ່າວສານ, ສະໜອງຂໍ້ມູນຂ່າວສານກ່ຽວກັບນະໂຍບາຍການສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນຕາມຄວາມຮັບຜິດຊອບໃນທ້ອງຖິ່ນຂອງຕົນ;

3) ຊຸກຍູ້, ຕິດຕາມກວດກາ, ປະເມີນຜົນການປະຕິບັດໂຄງການ, ກິດຈະການລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ ຕາມຄວາມຮັບຜິດຊອບຂອງຕົນ;

4) ປະສານສົມທົບກັບຂະແໜງອື່ນທີ່ກ່ຽວຂ້ອງພາຍໃນເມືອງ, ເທດສະບານ, ນະຄອນຂອງຕົນ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນກິດຈະການຂອງຕົນ;

5) ອຳນວຍຄວາມສະດວກໃນການດຳເນີນການບໍລິການ ການລົງທຶນປະຕູດຽວໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ ຕາມຄວາມຮັບຜິດຊອບຂອງຕົນ;

6) ເກັບກຳຂໍ້ມູນກ່ຽວກັບການລົງທຶນ ລວມທັງກິດຈະການລົງທຶນຕ່າງໆ ຢູ່ໃນເມືອງ, ເທດສະບານ, ນະຄອນ;

7) ສະເໜີສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກສົ່ງເສີມການລົງທຶນ;

8) ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການສົ່ງເສີມການລົງທຶນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

9) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**3. ສິດ ແລະ ໜ້າທີ່ຂອງຂະແໜງອຸສາຫະກຳ ແລະ ການຄ້າໃນການຄຸ້ມຄອງການລົງທຶນ**

ໃນການຄຸ້ມຄອງການລົງທຶນ ກະຊວງອຸດສາຫະກຳ ແລະ ການຄ້າມີ ສິດ ແລະ ໜ້າທີ່ ດັ່ງນີ້:

**+ ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

1) ຄົ້ນຄວ້າທິດທາງ, ນະໂຍບາຍແຜນພັດທະນາ ແລະ ສົ່ງເສີມວິສາຫະກິດ ພ້ອມທັງເປັນເຈົ້າຂອງໃນການຈັກຕັ້ງປະຕິບັດຜັນຂະຫຍາຍທິດທາງນະໂຍບາຍດັ່ງກ່າວ ໃນຂອບເຂດທົ່ວປະເທດ;

2) ຄຸ້ມຄອງການມີຕົວຕົນ ແລະ ການຈັດຕັ້ງທຸລະກິດຂອງທຸກປະເພດວິສາຫະກິດ ໃນຂັ້ນຄຸ້ມຄອງຂອງຕົນນັບແຕ່ຂອດສ້າງຕັ້ງຈົນໄປເຖິງຂອດຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ກົດໝາຍວ່າດ້ວຍວິສາຫະກິດ;

3) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ມາດຕະການ ຕໍ່ວິສາຫະກິດທີ່ລະເມີດກົດໝາຍ ແລະ ລະບຽບການ;

4) ບໍລິການຂຶ້ນໃບທະບຽນວິສາຫະກິດໃນທຸກກິດຈະການ;

5) ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ ແລະ ສາຂາຂອງວິສາຫະກິດຕ່າງປະເທດ;

6) ຮັບຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ ຍົກເວັ້ນການເພີ່ມ ຫຼື ຫຼຸດກິດຈະການຕາມທີ່ໄດ້ກຳນົດ ໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

7) ຊຸກຍູ້ ແລະ ຊີ້ນຳການພັດທະນາ ແລະ ສົ່ງເສີມວິສາຫະກິດທ້ອງຖິ່ນ;

8) ເກັບກຳປົກປັກຮັກສາ ແລະ ບໍລິການຂໍ້ມູນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ຂັ້ນສາທາລະນະຊົນ;

9) ແຈ້ງເຊີນວິສາຫະກິດເຂົ້າພົບ ເພື່ອອະທິບາຍເຫດຜົນ ຫຼື ແນະນຳຕັກເຕືອນ ກ່ຽວກັບການດຳເນີນທຸລະກິດ;

10) ສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນຕາມ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

11) ຖອນໃບທະບຽນວິສາຫະກິດຖາວອນ ຫຼື ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວິສາຫະກິດ;

12) ສັ່ງປ່ຽນແປງ ໂຈະ ຫຼື ລຶບລ້າງທະບຽນວິສາຫະກິດທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນທ້ອງຖິ່ນ;

13) ສະຫຼຸບ ແລະ ລາຍງານກ່ຽວກັບ ການສົ່ງເສີມ ແລະ ຄຸ້ມຄອງການຕາມຂອບເຂດຄວາມຮັບຜິດຊອບຂອງຕົນຕໍ່ລັດຖະບານຢ່າງເປັນປົກກະຕິ;

14) ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ລະບຽບການ.

**+ ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງການລົງທຶນຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ດັ່ງນີ້:

1) ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍແຜນພັດທະນາ ແລະ ສົ່ງເສີມວິສາຫະກິດ;

2) ຄຸ້ມຄອງການມີຕົວຕົນ ແລະ ການຈັດຕັ້ງທຸລະກິດຂອງທຸກປະເພດວິສາຫະກິດ ໃນຂັ້ນຄຸ້ມຄອງຂອງຕົນ ນັບແຕ່ຂອດສ້າງຕັ້ງຈົນໄປເຖິງຂອດຍຸບເລີກ ຫຼູ ລົ້ມລະລາຍ ຕາມທີ່ກົດໝາຍວ່າດ້ວຍວິສາຫະກິດ;

3) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ມາດຕະການ ຕໍ່ວິສາຫະກິດທີ່ລະເມີດກົດໝາຍ ແລະ ລະບຽບການ;

4) ບໍລິການຂຶ້ນໃບທະບຽນວິສາຫະກິດໃນທຸກກິດຈະການ;

5) ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ;

6) ຮັບຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ;

7) ຊຸກຍູ້ ແລະ ຊີ້ນຳການພັດທະນາ ແລະ ສົ່ງເສີມວິສາຫະກິດໃຫ້ແກ່ ເມືອງ, ເທດສະບານ, ນະຄອນຫຼວງ;

8) ເກັບກຳປົກປັກຮັກສາ ແລະ ບໍລິການຂໍ້ມູນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ຂັ້ນສາຫາລະນະຊົນ;

9) ແຈ້ງເຊີນວິສາຫະກິດເຂົ້າພົບ ເພື່ອອະທິບາຍເຫດຜົນ ຫຼື ແນະນຳຕັກເຕືອນ ກ່ຽວກັບການດຳເນີນທຸລະກິດ;

10) ສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

11) ຖອນໃບທະບຽນວິສາຫະກິດຖາວອນ ຫຼື ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວິສາຫະກິດ;

12) ສັ່ງປ່ຽນແປງ, ໂຈະ ຫຼື ລົບລ້າງທະບຽນວິສາຫະກິດທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ທະບຽນວິສາຫະ ກິດຂັ້ນທ້ອງຖິ່ນ;

13) ສະຫຼຸບ ແລະ ລາຍງານກ່ຽວກັບ ການສົ່ງເສີມ ແລະ ຄຸ້ມຄອງການຕາມຂອບເຂດຄວາມຮັບຜິດ ຊອບຂອງຕົນຕໍ່ລັດຖະບານຢ່າງເປັນປົກກະຕິ;

14) ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ລະບຽບການ.

**+ ສິດ ແລະ ໜ້າທີ່ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງການລົງທຶນຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ດັ່ງນີ້:

1) ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍແຜນພັດທະນາ ແລະ ສົ່ງເສີມວິສາຫະກິດ;

2) ຄຸ້ມຄອງການມີຕົວຕົນ ແລະ ການຈັດຕັ້ງທຸລະກິດຂອງທຸກປະເພດວິສາຫະກິດ ໃນຂັ້ນຄຸ້ມຄອງຂອງຕົນ ນັບແຕ່ຂອດສ້າງຕັ້ງຈົນໄປເຖິງຂອດຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ກົດໝາຍວ່າດ້ວຍວິສາຫະກິດ;

3) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ມາດຕະການ ຕໍ່ວິສາຫະກິດທີ່ລະເມີດກົດໝາຍ ແລະ ລະບຽບການ;

4) ບໍລິການຂຶ້ນໃບທະບຽນວິສາຫະກິດໃນທຸກກິດຈະການ;

5) ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ;

6) ຮັບຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ;

7) ເກັບກຳປົກປັກຮັກສາ ແລະ ບໍລິການຂໍ້ມູນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ຂັ້ນສາຫາລະນະຊົນ;

8) ແຈ້ງເຊີນວິສາຫະກິດເຂົ້າພົບ ເພື່ອອະທິບາຍເຫດຜົນ ຫຼື ແນະນຳຕັກເຕືອນ ກ່ຽວກັບການດຳເນີນທຸລະກິດ;

9) ສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

10) ຖອນໃບທະບຽນວິສາຫະກິດຖາວອນ ຫຼື ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວິສາຫະກິດ;

11) ສັ່ງປ່ຽນແປງ ໂຈະ ຫຼື ລຶບລ້າງທະບຽນວິສາຫະກິດທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນທ້ອງຖິ່ນ;

12) ສະຫຼຸບ ແລະ ລາຍງານກ່ຽວກັບ ການສົ່ງເສີມ ແລະ ຄຸ້ມຄອງການຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ລັດຖະບານຢ່າງເປັນປົກກະຕິ;

13) ນໍາໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ແລະ ລະບຽບການ.

**4. ສິດ ແລະ ໜ້າທີ່ຂອງຂະແໜງການເງິນ ໃນການຄຸ້ມຄອງການລົງທຶນ**

**+ ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງການສົ່ງເສີມການລົງທຶນ ຂະແໜງການເງິນມີສິດ ແລະ ໜ້າທີ່ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງ ນີ້:

1) ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະນິຕິກໍາ ກ່ຽວກັບຂະແໜງການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນ;

2) ຄົ້ນຄວ້າ, ປະກອບຄໍາເຫັນ ຕໍ່ການອະນຸຍາດການລົງທຶນ, ຕໍ່ອາຍຸສັນຍາ ແລະ ການປ່ຽນແປງເນື້ອໃນສັນຍາ;

3) ຊຸກຍູ້, ແນະນໍາ, ເຜີຍແຜ່, ຕາມການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍ ຂອງຂະແໜງ ການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນໃຫ້ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

4) ຊຸກຍູ້, ສົ່ງເສີມ, ອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ການລົງທຶນ, ພ້ອມທັງ ຕິດຕາມ ແລະ ຄຸ້ມຄອງນະໂຍບາຍດ້ານພາສີ, ອາກອນຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້;

5) ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງ, ອົງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວ ຂ້ອງ ໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການ ການລົງທຶນໃນຂອບເຂດທົ່ວປະເທດ;

6) ສະເໜີພາກສ່ວນທີ່ກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນທີ່ບໍ່ປະຕິ ບັດຕາມເປົ້າໝາຍການລົງທຶນ ຫຼື ດໍາເນີນທຸລະກິດບໍ່ໄປຕາມສັນຍາ, ບໍ່ເສັຍພັນທະດ້ານພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

7) ສ້າງ, ບໍາລຸງ, ຍົກລະດັບພະນັກງານກ່ຽວກັບວຽກສົ່ງເສີມການລົງທຶນ;

8) ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນ ຢູ່ ສປປ ລາວ;

9) ຈັດຕັ້ງປະຕິບັດນະໂຍບາຍ ສົ່ງເສີມການລົງທຶນ ຕາມການກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

10) ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

11) ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**+ ສິດ ແລະ ໜ້າທີ່ຂອງພະແນກການເງິນແຂວງ, ນະຄອນ.**

1) ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ ທີ່ຕິດພັນກັບການສົ່ງເສີມການລົງທຶນ;

2) ຄົ້ນຄວ້າ, ປະກອບຄໍາເຫັນ ຕໍ່ການອະນຸຍາດການລົງທຶນ, ຕໍ່ອາຍຸສັນຍາ ແລະ ການປ່ຽນແປງເນື້ອໃນສັນຍາ;

3) ຊຸກຍູ້, ແນະນໍາ, ເຜີຍແຜ່, ຕາມການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍ ຂອງຂະແໜງການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນໃຫ້ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

4) ຊຸກຍູ້, ສົ່ງເສີມ, ອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ການລົງທຶນ, ພ້ອມທັງ ຕິດຕາມ ແລະ ຄຸ້ມຄອງນະໂຍບາຍດ້ານພາສີ, ອາກອນ ຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້;

5) ປະສານສົມທົບກັບ ພະແນກແຜນການ ແລະ ການລົງທຶນ, ພະແນກການ, ອົງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການ ການລົງທຶນ;

6) ສະເໜີພາກສ່ວນທີ່ກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ, ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

7) ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກສົ່ງເສີມການລົງທຶນ;

8) ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານການເງິນ ທີ່ຕິດພັນກັບການສົ່ງເສີມ ການລົງທຶນ ຢູ່ ສປປ ລາວ ຕາມການມອບໝາຍຂອງຂັ້ນເທິງ;

9) ຈັດຕັ້ງປະຕິບັດນະໂຍບາຍ ສົ່ງເສີມການລົງທຶນ ຕາມການກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

10) ສະຫຼຸບ ແລະ ລາຍງານວຽກງານກ່ຍວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

11) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**+ ສິດ ແລະ ໜ້າທີ່ຂອງຫ້ອງການ ການເງິນ ເມືອງ, ເທດສະບານ, ນະຄອນ**

1) ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ ທີ່ຕິດພັນກັບການສົ່ງເສີມການລົງທຶນ;

2) ແນະນຳ, ເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບຂະແໜງການເງິນ ທີ່ຕິດພັນກັບວຽກງານການສົ່ງເສີມການລົງທຶນ;

3) ຊຸກຍູ້, ສົ່ງເສີມ, ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ການລົງທຶນ, ພ້ອມທັງຕິດຕາມ ແລະ ຄຸ້ມຄອງນະໂຍບາຍດ້ານພາສີ, ອາກອນຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;

4) ປະສານສົມທົບກັບ ຂະແໜງານອື່ນທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານ, ນະຄອນຂອງຕົນ ໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການ ການລົງທຶນ;

5) ສະເໜີພາກສ່ວນທີ່ກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ, ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

6) ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກສົ່ງເສີມການລົງທຶນ;

7) ຈັດຕັ້ງປະຕິບັດນະໂຍບາຍ ສົ່ງເສີມການລົງທຶນ ຕາມການກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

8) ສະຫຼຸບ ແລະ ລາຍງານວຽກງານກ່ຍວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

9) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**5. ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ ໃນການຄຸ້ມຄອງການລົງທຶນ**

ຂະແໜງກະສິກຳ ແລະ ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ໂຍທາທິການ ແລະ ຂົນສົ່ງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**- ຂັ້ນກະຊວງ:**

1) ຄົ້ນຄວ້າສ້າງ, ໂຄສະນາເຜີຍແຜ່ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນໃນຂະແໜງການຂອງຕົນ;

2) ປະສານສົມທົບກັບຂະແໜງການ ແຜນການ ແລະ ການລົງທຶນ, ອຸດສາຫະກຳ ແລະ ການຄ້າ ແລະ ການເງິນ ໃນການສ້າງແຜນ ການດຶງດູດການລົງມືນທີ່ພົວພັນກັບຂະແໜງການຕົນ;

3) ຊີ້ນຳ ແລະ ອຳນວຍຄວາມສະດວກໃນການດຳເນີນການບໍລິການການລົງທຶນປະຕູດຽວໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

4) ເປັນເຈົ້າການປະສານງານ ກັບຂະແໜງການທີ່ກ່ຽວຂ້ອງໃນການສ້າງ ແລະ ປັບປຸງກົດໝາຍ, ລະບຽບການ, ແບບພິມມາດຕະຖານ, ຂັ້ນຕອນ, ເຕັກນິກ ພ້ອມທັງປະກາດໃຊ້ແບບພິມ ແລະ ແນະນຳການຈັດຕັ້ງປະຕິບັດຕາມຂອບເຂດ

ຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມເປັນເອກະພາບ, ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳລຸ່ມກົດໝາຍ ແລະ ການປະຕິບັດສັນຍາການລົງທຶນ ໃນບັນດາກິດຈະການ ທີ່ໄດ້ຮັບອະນຸມັດຈາກຂະແໜງການຕົນ;

5) ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງໃນການຄຸ້ມຄອງການລົງທຶນ, ການປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ລວມທັງການແກ້ໄຂຂໍ້ສະເໜີ, ຂໍ້ຂັດແຍ່ງ ແລະ ບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນຂອບເຂດທົ່ວປະເທດ;

6) ຄົ້ນຄວ້າ ແລະ ມີຄຳເຫັນຕໍ່ການລົງທຶນ ທີ່ພົວພັນກັບຂະແໜງການຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

7) ກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກສົ່ງເສີມການລົງທຶນ;

8) ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນ;

9) ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມການລົງທຶນຕໍ່ກະຊວງແຜນການ ແລະ ການລົງທຶນເພື່ອສັງລວມລາຍງານ ໃຫ້ລັດຖະບານຢ່າງເປັນປົກກະຕິ;

10) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**- ຂັ້ນແຂວງ ແລະ ຂັ້ນເມືອງ**

1) ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນໃນຂະແໜງການຂອງຕົນ;

2) ປະສານສົມທົບກັບຂະແໜງການ ແຜນການ ແລະການລົງທຶນ, ອຸດສາຫະກຳ ແລະ ການຄ້າ ແລະ ການເງິນ ໃນການສ້າງແຜນ ການດຶງດູດການລົງທຶນທີ່ພົວພັນກັບຂະແໜງການຕົນຮັບຜິດຊອບ;

3) ອຳນວຍຄວາມສະດວກໃນການດຳເນີນການບໍລິການ ການລົງທຶນປະຕູດຽວໃຫ້ມີຄວນມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ ແລະ ສອດຄ່ອງກັບກົດໝາຍ;

4) ປະສານສົມທົບກັບບັນດາຂະແໜງການ ຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງໃນການຄຸ້ມຄອງການລົງທຶນ, ການປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ລວມທັງການແກ້ໄຂສິ່ງກີດຂວາງ ແລະ ບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນທ້ອງຖິ່ນຂອງຕົນ;

5) ຄົ້ນຄວ້າ ແລະ ມີຄຳເຫັນຕໍ່ການລົງທຶນ ທີ່ພົວພັນກັບຂະແໜງການຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

6) ກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກສົ່ງເສີມການລົງທຶນ;

7) ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນຕາມການຕົກລົງຂອງຂັ້ນເທິງ;

8) ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມການລົງທຶນຕໍ່ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມລາຍງານ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

9) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**References:**


1. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
3. ດຳລັດວ່າດ້ວຍເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018.